ໂຄງການພຸດທະສາສະໜາເພື່ອການພັດທະນາ(ຄ.ພ.ພ),ພຣະສົງສາມະເນນ, ສິດສານຸສິດ ພ້ອມດ້ວຍການ ຈັດຕັ້ງບ້ານແລະເຖົ້າແກ່ແນວໂຮມ ໄດ້ພ້ອມພຽງກັນຈັດຕັ້ງບຸນສະຫຼອງ 100 ປີ ຊາຕະການພຣະອາຈານ ມະຫາປານ ອານັນໂທ ຂຶ້ນໃນວັນທີ 24, 25, 26/10/2010 ກົງກັບແຮມ 1, 2, 3 ຄ່ຳ ເດືອນ 11 ພສ 2553 ທີ່ ວັດມະຫາພຸດທະວົງສາປ່າຫຼວງ ບ້ານ ໂສກປ່າຫຼວງ ເມືອງ ສີສັດຕະນາກ ນະຄອນຫຼວງວຽງຈັນ. ເນື່ອງຈາກພຣະ ອາຈານເປັນປູ ຊະນີຍະບຸກຄົນທີ່ຊາວພຸດລາວຮຸ່ນໃໝ່ຄວນຮູ້ຈັກ ແລະເນື່ອງໃນໂອກາດທີ່ພັກ ແລະລັດຖະບານ ຈະສະຫຼອງນະຄອນຫລວງວຽງຈັນ 450 ປີ. ໃນເດືອນຕຸລາປີ 2010 ນີ້ ກົງກັບວາລະຄົບຮອບ 100 ປີ ຊາຕະການ ຂອງພຣະອາຈານພໍດີ, ເພື່ອນ້ອມລະນຶກເຖິງຄຸນງາມຄວາມດີ ແລະ ສະແດງຄວາມກະຕັນຍູກະຕະ ເວທີຕໍ່ທ່ານ ບັນດາສິດສານຸສິດ ແລະຜູ້ມີສັດທາໃນພຸດທະສາສະໜາທັງຫຼາຍ ຈຶ່ງມີສັດທາປາສາຖະອັນແຮງກ້າ ຈັດບຸນດັ່ງກ່າວນີ້ຂຶ້ນ.

<u>ຈຸດປະສົງ:</u>

1. ເພື່ອເຜີຍແຜ່, ຈັດສະແດງຜົນງານຂອງພຣະອາຈານ
2. ເພື່ອສ້າງກອງທຶນສະໜັບສະໜູນການສຶກສາຂອງພຣະສົງສາມະເນນ
3. ເພື່ອສ້າງກອງທຶນຈັດພິມປຶ້ມທັມມະໃຫ້ເປັນທັມມະທານສືບຕໍ່ໄປ
4. ເພື່ອສະແດງຄວາມກະຕັນຍູກະຕະເວທີ ຕໍ່ ອຸປັຊຊາອາຈານ

ສາລະບານ

ຄຳອາລຳພາບົດຜູ່ຮຽບຮຽງ 6
ຄຳນຳ 7
ປະຫວັດ ວັດມະຫາພຸດທະວົງສາປ່າຫຼວງ 9
ຊີວິດ ແລະຜົນງານຂອງພຣະອາຈານ ມະຫາປານ ອານັນໂທ 17
ຊີວິດໃນເບື້ອງຕົ້ນ ແລະຕະກູນ 20
ມູນເຫດພາໃຫ້ໄປເກີດຢູ່ບ້ານອະຫໍໂຄກ 20
ໂຊກຊະຕາກັບຜ້າເຫຼືອງ 21
ການສຶກສາ ແລະສະແຫວງຫາເປົ້າໝາຍຊີວິດ 22
ເມື່ອອຸປະສົມບົດເປັນພຣະພິກຂຸ 23
ດຳເນີນການເຜີຍແຜ່ ຕາມພູມຄວາມຮູ້ທີ່ໄດ້ຮຽນມາ 28
ສະແດງຄວາມກະຕັນຍູຕໍ່ຊາດ ແລະສາສະໜາ 29
ການເຄື່ອນໄຫວໃນຕ່າງປະເທດ 38
ກຽດປະຫວັດທີ່ໄດ້ຮັບພາຍໃນປະເທດ 50
ກຽດປະຫວັດທີ່ໄດ້ຮັບໃນຕ່າງປະເທດ 50
ແຜນການຂອງພຣະອາຈານ ມະຫາປານ ທີ່ຈະສ້າງ 50

ຄຳອາລຳພະບົດຜູ່ຮຽບຮຽງ

ເພື່ອເປັນການນ້ອມລະນຶກເຖິງບຸນຄຸນທີ່ສູງສົ່ງ ສະແດງອອກເຊິ່ງຄວາມກະຕັນຍູກະຕະເວທິຕາທັມ ຕໍ່ພຣະອາຈານ ມະຫາປານ ອານັນໂທ ຜູ້ທີ່ມີອຸປະການະຄຸນຕໍ່ປະເທດຊາດ ແລະພຣະພຸດທະສາສະໜາ ຄະນະສິດສານຸສິດໂດຍມີພຣະອາຈານ ດຣ. ຊາລີ ກັນຕະສີໂລ ຮອງປະທານສູນກາງອົງການພຸດທະສາສະໜາສຳພັນລາວ ເປັນປະທານ ພ້ອມດ້ວຍບັນດາພຣະເຖຣານຸເຖຣະ ແລະອອກຕົນຍາດໂຍມ ສິດສານຸສິດ ອົງການຈັດຕັ້ງມະຫາຊົນ ແລະເຖົ້າແກ່ແນວໂຮມຕະຫຼອດຊາວພຸດທົ່ວໄປ ໄດ້ພ້ອມໃຈກັນເຮັດບຸນສະຫຼອງຄົບຮອບ 100 ປີ ຊາຕະການ ຂອງພຣະອາຈານ ມະຫາປານ ອານັນໂທ ອີກທັງເປັນການສ້າງສີສັນໃຫ້ແກ່ການສະເຫຼີມສະຫຼອງ ນະຄອນຫຼວງວຽງຈັນ 450 ປີໃຫ້ມີຄວາມໝາຍຍິ່ງຂຶ້ນ.

ຂ້າພະເຈົ້າຮັບຜິດຊອບ ຈັດນິທັດສະການຊີວິດແລະຜົນງານຂອງພຣະອາຈານ ໃນຄັ້ງນີ້ ດ້ວຍຄວາມເຫຼື້ອມໃສສັດທາ ແລະຊາບຊຶ້ງທີ່ສຸດທີ່ໄດ້ມີໂອກາດສຶກສາຄົ້ນຄວ້າ ແລະຮຽບຮຽງໜັງສື ອາຈະຣິຍະບູຊານູສອນນີ້ຂຶ້ນ ເຊິ່ງປະກອບດ້ວຍ 2 ພາກຄື 1). ຄວາມເປັນມາໂດຍຫຍໍ້ຂອງວັດມະຫາພຸດທະວົງສາປ່າຫຼວງ, ແລະ 2). ຊີວິດ ແລະຜົນງານຂອງພຣະອາຈານມະຫາປານ ອານັນໂທ ຕາມທີ່ໄດ້ຂໍ້ມູນຈາກໜັງສື: ຊີວິດ ແລະຜົນງານຂອງພຣະມະຫາເຖຣະຫ້າອົງ,ປະມວນໂອວາດ, ອະນຸສອນ ໂຮງຮຽນພຣະອະພິທັມແລະສົມໂພດພຣະພຸດທະຮູບສີວຽງລິດ, ພຸດທະວົງສ໌ສະບັບພິເສດ ແລະສະບັບທົ່ວໄປ, ຊີວິດແລະຜົນງານບາງສ່ວນຂອງພຣະອາຈານ ມະຫາປານອານັນໂທ ໂດຍ ມະຫາບຸນຖິ່ນ ຈັນທະມົນຕີ ແລະການບອກເລົ່າຂອງ ພຣະອາຈານ ຊາລີ ກັນຕະສີໂລ ເປັນຕົ້ນ ມາຮຽບຮຽງໃຫ້ທຸກທ່ານໄດ້ຮັບຮູ້ເຖິງຊີວິດ ແລະການເຮັດວຽກ ຢ່າງເສຍສະຫຼະ ແລະທໍລະທົດອົດທົນຂອງເພີ່ນມາໄວ້ເພື່ອເປັນເຄື່ອງເຕືອນໃຈ ແລະເປັນແວ່ນແຍງແຫ່ງການບຳເພັນຕົນເພື່ອປະໂຫຍດແກ່ສັງຄົມ.

ຜູ່ຮຽບຮຽງ
ພຣະທອງພັນ ວະຣະໂທ (ສຸກໄຊຍະລາດ)

ຄຳນຳ

ສັບພະທານັງ ທັມມະທານັງ ຊິນາຕິ
(ການໃຫ້ທັມມະເປັນທານ ຊະນະການໃຫ້ທັງປວງ)

ການຈັດພິມໂຮມຜົນງານຂອງ ພຣະອາຈານ ມະຫາປານ ອານັນໂທ ໂດຍ ຄ.ພ.ພ. ໃນຄັ້ງນີ້ ປະກອບດ້ວຍປຶ້ມນ້ອຍໆສີ່ເຫຼັ້ມ ຄື:

1. ຊີວິດແລະຜົນງານ ຂອງ ພຣະອາຈານມະຫາປານ ອານັນໂທ
2. ຫຼັກການດຳເນີນຊີວິດ ຂອງຊາວພຸດ
3. ທຸຣະໃນທາງພຸດທະສາສະໜາ
4. ສາລະຄະດີເລື່ອງ ສາສະນະພິທີ

ໃຫ້ເປັນທັມມະທານ ແລະ ເຜີຍແຜ່ພຣະທັມຄຳສອນຕ່າງໆ ເນື່ອງໃນໂອກາດ ສະຫຼອງ 100 ປີ ຊາຕະການຂອງ ພຣະອາຈານທີ່ວົງນມາບັນຈົບຄົບຮອບໃນປີ 2010 ນີ້.

ພຣະອາຈານ ພ້ອມດ້ວຍນັກປາດອາຈານຝ່າຍພຣະພຸດທະສາສະໜາ ແລະສິດສານຸສິດຫຼາຍທ່ານ ທັງທີ່ຍັງມີຊີວິດ ແລະລ່ວງລັບດັບຂັນໄປແລ້ວ ໄດ້ຝາກມໍລະດົກອັນລ້ຳຄ່າໄວ້ໃຫ້ແກ່ຊາວພຸດທະບໍລິສັດມາກມາຍ ຄວາມມຸ່ງຫວັງ ແລະເຈຕະນາລົມ ຂອງພຣະອາຈານ ແມ່ນເຫັນພຣະພຸດທະສາສະໜາຈະເລີນຮຸ່ງເຮືອງຢູ່ໃນດິນແດນນີ້ດ້ວຍການຈະເລີນພາວະນາ ແລະປະຕິບັດກັມມະຖານ. ການຈັດພິມຜົນງານຂອງພຣະອາຈານນອກຈາກຈະໃຫ້ຄຳຊີ້ແນະໃນການປະຫິດ ປະຕິບັດຢ່າງຖືກຕ້ອງ ມີຄວາມພໍເໝາະພໍດີ ຮູ້ຈັກກົກເຄົ້າຄວາມເປັນມາ ຄວາມໝາຍຂອງພິທີກັມນັ້ນໆແລ້ວ ກໍຍັງຈະເປັນການຮັບສັດທາທານຈາກພຸດທະບໍລິສັດທັງຫຼາຍ ເພື່ອສ້າງຕັ້ງກອງທຶນສົ່ງເສີມການສຶກສາທາງພຸດທະສາສະໜາໄວ້ໃຫ້ແກ່ລູກຫຼານຮຸ່ນປັດຈຸບັນ.

ຈຶ່ງນັບວ່າເປັນບຸນກຸສົນຂອງພວກເຮົາທີ່ມີບຸພາຈານຜູ້ປະເສີດຢ່າງນີ້ ຄວນທີ່ພວກເຮົາຈັກສືບທອດແຜ່ຂະຫຍາຍມູນມໍລະດົກຕ່ອນນີ້ຂອງທ່ານໃຫ້ເປັນປະໂຫຍດແກ່ສາທາລະນະຊົນສືບຕໍ່ໄປ ທັງນີ້ຍັງເປັນການຮ່ວມສະຫຼອງ

ນະຄອນຫຼວງວຽງຈັນ 450 ປີ ໃຫ້ມີຄວາມອຸດົມສົມບູນຢ່າງຮອບດ້ານຂຶ້ນຕື່ມ.

ໃນຄວາມເປັນຈິງແລ້ວ ຜົນງານຂອງພຣະອາຈານ ຍັງມີອີກມາກມາຍ ແຕ່ພວກເຮົາຍັງບໍ່ສາມາດ ເກັບກຳຮິບໂຮມມາຈັດພິມໄດ້ທັງໝົດເທື່ອ ດ້ານນຶ່ງກໍ່ດ້ວຍຂາດເຂີນທັງວັດຖຸປັດໄຈ ແລະລະດັບຄວາມຮູ້ຄວາມເຂົ້າໃຈຢ່າງຖ່ອງແທ້. ເມື່ອໃດມີເງື່ອນໄຂພຽງພໍ ກໍ່ຈະໄດ້ຄ່ອຍໆຈັດພິມອອກມາ.

ໃນນາມໂຄງການຂໍອວຍພອນ ໃຫ້ທ່ານຈົ່ງມີຄວາມສຸກຄວາມຈະເລີນ ປາສະຈາກທຸກໂສກໂຣກໄພ ແລະໄດ້ດັ່ງຄຳປາຖະໜາດ້ວຍພອນສີ່ປະການຄື ອາຍຸ ວັນນະ ສຸຂະ ພະລະ ດ້ວຍເຖີ້ນ.

ນະຄອນຫຼວງວຽງຈັນ ທີ່ຫ້ອງການ
ໂຄງການພຸດທະສາສະໜາເພື່ອການພັດທະນາ

24 / VII

ຫ້ອງສະໝຸດ ມ.ຈ


ປະຫວັດ
ວັດມະຫາພຸດທະວົງສາປ່າຫຼວງ
ເມືອງສີສັດຕະນາກ ນະຄອນຫຼວງວຽງຈັນ

ດ້ວຍວ່າ ວັດມະຫາພຸດທະວົງສາປ່າຫຼວງແຫ່ງນີ້ ມີຄວາມເກົ່າແກ່ ທັງກໍມີປະຫວັດພໍທີ່ຈະນຳມາບອກກ່າວໄວ້ ເປັນການສືບທອດຂໍ້ມູນປະຫວັດສາດ ສ່ວນນຶ່ງໃນໂອກາດສະເຫຼີມສະຫຼອງ ວຽງຈັນເປັນນະຄອນຫຼວງ ຄົບຮອບ 450 ປີ ທີ່ພັກແລະລັດຖະບານລາວ ໄດ້ໃຫ້ຄວາມສຳຄັນພໍສົມຄວນ, ດັ່ງນັ້ນ ໃນໂອກາດອັນນີ້ຈຶ່ງໄດ້ຮຽບຮຽງຕື່ມດັ່ງນີ້:

1.ຍຸກຕົ້ນ ນັບແຕ່ ພ.ສ 236

ເມື່ອສະໄໝພຣະເຈົ້າຈັນທະບູຣີ ສີອ່ວຍລ່ວຍ(ພຣະເຈົ້າຈັນທະບຸຣີປະສິດທິສັກ) ຄອງຈັນທະບຸຣີສີສັດຕະນາ ຄະນະຫຸດ (ອີງຕາມພົງສາວະດານລາວ ສະບັບຂອງຍາພໍ່ ມະຫາສີລາ ວີຣະວົງສ໌) ບັນທຶກໄວ້ວ່າ ພຣະອົງໄດ້ສ້າງວັດໃຫ້ພຣະອະຣະຫັນ ສອງອົງຄື:

1. ພຣະມະຫາພຸດທະວົງສ໌ ໃຫ້ປະຈຳຢູ່ວັດມະຫາພຸດທະວົງສາປ່າຫຼວງ
2. ພຣະມະຫາສັດສະດີ ໃຫ້ປະຈຳຢູ່ວັດທາດຝຸ່ນ

ຕໍ່ມາ ພຣະມະຫາພຸດທະວົງສ໌ ຈຶ່ງໄປນຳເອົາພຣະທາດພຣະອະຣະຫັນມາບັນຈຸໄວ້ໃນວັດປ່າມະຫາພຸດທະວົງ ໄດ້ກົ່ນດິນລົງ 5 ວາ, ກວ້າງ 3 ວາ ກໍ່ດ້ວຍດິນຈີ່ ເປັນຮູບຜາສາດ ເອົາແຜ່ນເງິນລຽງປູຮອງໄວ້ຈຶ່ງເອົາພຣະທາດວາງລົງໃສ່ ແລະເອົາຫີນໝາກຄອມຖົມໃຫ້ແໜ້ນແລ້ວຝັງຫຼັກສິລາໝາຍໄວ້, ສິລານັ້ນສູງ 3 ວາ, ກວ້າງ 1ວາເວລານັ້ນເຂດແດນເມືອງຈັນທະບູຣີ ທາງໃຕ້ຕິດກັບເມືອງປາກກະດົງທາງຟາກນ້ຳຂອງເຖິງຫ້ວຍບັງບາດ (ຢູ່ໃນເຂດອຳເພີບົງການ ຈັງຫວັດໜອງຄາຍ).

ໃນສະໄໝດຽວກັນນີ້ປາກົດວ່າມີພຣະອະຣະຫັນຕ໌ອີກ 3 ອົງ ຈາກປະເທດອິນເດຍ ຊຶ່ງເປັນລູກສິດຂອງພຣະມະຫາກັດສະປະຄື:

1. ພຣະພຸດທະຣັກຂິດຕະເຖຣະ.
2. ພຣະທັມມ໌ຣັກຂິດຕະເຖຣະ.
3. ພຣະສັງຄະຣັກຂິດຕະເຖຣະ.

ໄດ້ເຂົ້າມາເຜີຍແຜ່ພຣະພຸດທະສາສະໜາໃນປະເທດລ້ານຊ້າງວຽງຈັນນີ້ໃຫ້ຈະເລີນຮຸ່ງເຮືອງ ດ້ວຍສິນທັມ ແລະມີລູກສິດທີ່ສຳເລັດບັນລຸພຣະອະຣະຫັນຕ໌ ຊຶ່ງເປັນ ພຣະຊາວລ້ານຊ້າງຈຳນວນ 5 ອົງຄື:

1. ພຣະມະຫາຣັດຕະນະເຖຣະ.

2. ພຣະຈຸນລະຕະນະເຖຣະ.
3. ພຣະມະຫາສຸວັນນະປະສາທະເຖຣະ.
4. ພຣະຈຸນລະສຸວັນນະປະສາທະເຖຣະ.
5. ພຣະສັງຂ໌ວິໄຊເຖຣະ

ທ່ານທັງ 5 ອົງນີ້ກໍໄດ້ຊ່ວຍອົບຮົມເຜີຍແຜ່ພຣະພຸດທະສາສະໜາ ໄປໃນເຂດປະເທດລ້ານຊ້າງ ນະຄອນວຽງຈັນນີ້ ຊຶ່ງມີພຣະເຈົ້າຈັນທະບຸຣີ ເປັນອົງສາສະນຸປະຖຳ ພຣະອົງຊົງມີພຣະຣາຊສັດທາອັນແຮງກ້າ ໄດ້ຊົງສ້າງວັດຖວາຍພຣະອະຣະຫັນຕ໌ທັງ 5 ພຣະອົງຊຶ່ງເປັນວັດປ່າ ເອີ້ນວ່າ: ອະຣັນຍະວາສີ ດັ່ງປາກົດໃນຕຳນານອຸຣັງຄະນິທານວ່າ "ວັດມະຫາພຸດທະວົງສາປ່າຫຼວງ" ບາງຕຳນານມີຊື່ວ່າວັດປ່າແດງຫຼວງ ຫຼື "ວັດໂສກປ່າຫຼວງ" ຊຶ່ງປາກົດເຂດ ໃນຕຳນານນີ້ຕັ້ງແຕ່ທາດຫຼວງຈົນຮອດຈີ່ນາຍໂມ້ ຕາມສາຍດົງນອກຄູວຽງ ຊຶ່ງມີອານາເຂດກ້ວາງຂວາງ ແລະຍາວຫຼາຍ ພຣະອົງຊົງອະນຸຍາດຍົກໃຫ້ເປັນສຳນັກວັດປ່າເພື່ອພ່ຳເພັງວິປັດສະນາກັມມະຖານ ຈຶ່ງມີຕຳນານຕໍ່ທ້າຍປະຫວັດວ່າ "ປ່າຫຼວງ" ມີທັງ 3 ຊື່ທີ່ກ່າວແລ້ວນັ້ນ ຄຳວ່າ "ປ່າຫຼວງ" ໝາຍເຖິງປ່າໃຫຍ່ຍາວ ຫຼືຂອງຫຼວງ ຍົກໃຫ້ໃນສະໄໝນັ້ນ ພາຍໃນຕັ້ງແຕ່ຄູວຽງເຂົ້າມາເປັນອານາເຂດຂອງຝ່າຍຄັນຖະທຸຣະ ນັບວ່າພຣະພຸດທະສາສະໜາ ໃນສະໄໝພຣະເຈົ້າຈັນທະບູຣີປະສິດທິສັກປົກຄອງນະຄອນວຽງຈັນທະບຸຣີສີສັດຕະນາ ຄະນະທຸດ ຮູ້ສຶກວ່າໄດ້ຈະເລີນຮຸ່ງເຮືອງທັງຝ່າຍຄັນຖະທຸຣະ ແລະວິປັດສະນາທຸຣະ ຈົນສິ້ນຍຸກສະໄໝຂອງພຣະອົງ.

ໄລຍະການຕໍ່ມາ ເມື່ອພຸດທະສັກກະຣາຊ 2103 ພຣະເຈົ້າໄຊເຊດຖາທິລາດ ໄດ້ຍ້າຍເມືອງຫຼວງຈາກເມືອງຫຼວງພະບາງ ລົງມາຕັ້ງນະຄອນວຽງຈັນເປັນຣາຊຊະທານີ ພຣະອົງຊົງປະກອບໄປດ້ວຍທົດສະພິດຣາຊະທັນ ແລະຊົງມີປີຊາສາມາດຮວບຮວມປະຊາຊົນພົນລະເມືອງ ໃຫ້ຢູ່ພາຍໃຕ້ຮົ່ມພຣະບາລະມີເປັນອັນມາກ ແລະຊົງປົກຄອງປະຊາຊົນໃຫ້ຢູ່ດີກິນດີ ປະກອບໄປດ້ວຍພຣະຣາຊະສັດທາເຫຼື້ອມໃສໃນພຣະພຸດທະສາສະໜາ ໄດ້ຊົງສ້າງພຣະທາດຫຼວງຂຶ້ນເພື່ອໃຫ້ເປັນປູຊະນີຍະສະຖານອັນຖາວອນ ແຕ່ກ່ອນພຣະທາດນີ້ ເປັນອຸບມຸງບັນຈຸພຣະສາຣີຣິກະທາດຂອງພຣະພຸດທະເຈົ້າ ທີ່ພຣະເຈົ້າສີທຳໂສກະຣາຊ ໄດ້ປະທານ ໃຫ້ແກ່ປະເທດລ້ານຊ້າງວຽງຈັນ ແລະໄດ້ຊົງສ້າງວັດປ່າ 1 ວັດ (ດົງສັງວານ) ແລະນອກຈາກນີ້ກໍຍັງໄດ້ປະຕິສັງຂອນວັດມະຫາພຸດທະວົງສາປ່າຫຼວງ

ໃຫ້ເປັນສໍານັກວິປັດສະນາກັມມະຖານ ເຊິ່ງໃນສະໄໝນັ້ນມີພຣະ ປະຈໍາຢູ່ຫຼາຍຮ້ອຍອົງ ແລະສ້າງອຸບມຸງບັນຈຸພຣະທາດພຣະອໍລະຫັນທັງຫ້າພຣະອົງດ້ວຍ ນອກຈາກນີ້ ກໍຍັງໄດ້ສ້າງສາລາໃໝ່ຂຶ້ນອີກຫຼັງນຶ່ງ ເພື່ອບໍາເພັນພຣະຣາຊະກຸສົນ ແລະສາທາລະນະປະ�โຫຍດແກ່ປະຊາຊົນທົ່ວໄປ ເມື່ອຊົງປະຕິສັງຂອນວັດມະຫາພຸດທະວົງສາປ່າຫຼວງນີ້ແລ້ວ ພຣະອົງກໍຊົງສ້າງວັດຂຶ້ນຫຼາຍວັດ ລ້ວນແຕ່ເປັນປ່າທັງນັ້ນເຊັ່ນ: ວັດປ່າໂກຕິ, ວັດປ່າກາງ, ວັດປ່າກັນທອງ ແລະວັດນາກເຫຼົ່ານີ້ ພຣະບໍວອນພຸດທະສາສະໜາໃນສະໄໝຂອງພຣະອົງໄດ້ມີຄວາມຈະເລີນຮຸ່ງເຮືອງຫຼາຍ ມີປູສະນີຍະວັດຖຸເຊັ່ນ: ພຣະທາດຫຼວງ, ພຣະພຸດທະຮູບ ມີພຣະອົງຕື້ ແລະພຣະໄຊຍະເຊດຖາເປັນຕົ້ນ ທີ່ໃຫ້ພວກເຮົາໄດ້ພາກັນໄຫວ້ສັກກະລະບູຊາຈົນຮອດທຸກມື້ນີ້ ກໍເພາະອາໃສພຣະປາຣະມີຂອງພຣະອົງຊົງປະຕິສັງຂອນແລະສ້າງໄວ້ໃຫ້ເປັນມໍລະດົກອັນລໍ້າຄ່າ ຝາກໄວ້ໃຫ້ແກ່ພວກເຮົາ ນັບວ່າພຣະອົງຊົງໄດ້ສົ່ງເສີມທັງຄັນຖະທຸຣະ ແລະວິປັດສະນາທຸຣະໃຫ້ຈະເລີນຮຸ່ງເຮືອງທຽມເທົ່າກັບສະໄໝພຣະເຈົ້າຈັນທະບູຣີ ປະສິດທິສັກ ຄອງນະຄອນວຽງຈັນ, ຫຼັງຈາກທີ່ພຣະອົງໄດ້ສະຫວັນຄົດເມື່ອປີ ພ.ສ 2114 ແລ້ວກໍບໍ່ມີໃຜປະຕິສັງຂອນຟື້ນຟູຂຶ້ນອີກ ປ່ອຍໃຫ້ຊໍາລຸດຊຸດໂຊມລົງໄປໂດຍລໍາດັບ ຈົນເປັນວັດຮ້າງ ໃນທີ່ສຸດກໍເປັນປ່າເປັນດົງໄປ ຄົນທີ່ເກີດມາພາຍຫຼັງ ທີ່ບໍ່ຮູ້ປະຫວັດກໍພາກັນຈັບຈອງເປັນໄຮ່ເປັນສວນ ຍຶດເປັນກໍາມະສິດສ່ວນຕົວກໍມີຫຼາຍ ແລະເປັນໂອກາດໃຫ້ຜູ້ມີຈິດໃຈຫຍາບຊ້າພາກັນໄປທໍາລາຍ ປູສະນີຍະສະຖານເຊັ່ນ: ພຣະທາດເຈດີ, ຕົ້ນສີມະຫາໂພ ຕະຫລອດເຖິງວິຫານ ໃຫ້ເພພັງລົງຈົນບໍ່ປາກົດຊາກເຫຼືອຢູ່ແລ້ວ. ຊາວພຸດ ບໍ່ພຽງແຕ່ເປັນຜູ້ທີ່ສັດທາໃນພຸດທະສາສະໜາເທົ່ານັ້ນ ຍັງຈໍາເປັນຕ້ອງໄດ້ເປັນຜູ້ປົກປັກຮັກສາ ທະນຸບໍາລຸງ ບໍ່ໃຫ້ໃຜມາທໍາລາຍ ມ້າງເພ ມໍລະດົກຊັບສົມບັດຂອງຊາດ ແລະສາສະໜາ.

2.ຍຸກຟື້ນຟູ: ພ.ສ 2497 - 2513 (ຍຸກຂອງພຣະອາຈານ ມະຫາປານ ອານັນໂທ)

ພຣະອາຈານ ມະຫາປານ ອານັນໂທ ໄດ້ຄົ້ນພົບຕຳນານ ທີ່ກ່າວເຖິງ ພຣະມະຫາເຖຣະຄະນາຈານໃຫຍ່ ຝ່າຍວິປັດສະນາທຸຣະ ທີ່ເຄີຍປະຈຳຢູ່ວັດມະ ຫາພຸດທະວົງສາປ່າຫຼວງນີ້ 4 ອົງຄື:

1. ສົມເດັດພຣະສັງຄະຣາຊເຈົ້າວຸດທິໂສມມຸນີ
2. ສົມເດັດພຣະມະຫາວິໄຊທາຕຸຣາຊມະຫາມຸນີ
3. ສົມເດັດມະຫາພຸທຣັງສີ ບໍ່ວອນມຸນີ
4. ຍາຄຣູໂພນສະເນັກ (ຍາຄູຂີ້ຫອມ)

ເພີ່ນເຫັນວ່າ ເປັນວັດສຳຄັນມາແຕ່ບູຮານນະການ ຈຶ່ງໄດ້ໄປກວດເບິ່ງ ສະຖານທີ່ແຫ່ງນີ້ ກໍ່ໄດ້ເຫັນ ຊາກກຸຕິວິຫານຕ່າງໆ ເປັນຕົ້ນວ່າ ສິມ ແລະກຸຕິນ້ອຍ ບໍ່ຕ່ຳກວ່າຮ້ອຍຫຼັງ ນອກຈາກນັ້ນຍັງເຫັນນ້ຳສ້າງອີກ 25 ໜ່ວຍ ກັບພຣະທາດເຈດີ 37 ລູກ ແລະວິຫານພຣະເຈົ້າ 5 ພຣະອົງ ຈຶ່ງນັບວ່າ ເປັນສິ່ງສຳຄັນພິເສດ ກົງກັບຕຳນານກ່າວໄວ້ ເຮັດໃຫ້ເພີ່ນເຊື່ອວ່າ ວັດນີ້ຄົງເປັນສຳນັກວິປັດສະນາກັມ ມະຖານມາກ່ອນ ເພາະເປັນວັດປ່າ ແລະມີຊາກກຸຕິນ້ອຍໆ ທີ່ສະແດງເປັນຊາກ ກຸຕິວິປັດສະນາກັມມະຖານ ປະມານຮ້ອຍກວ່າຫຼັງ ແລະຍັງມີສິມໃຫຍ່ ໜ່ວຍນຶ່ງ ຮຽກວ່າສິມພຣະຄຣູໂພນສະເນັກ (ຍາຄູຂີ້ຫອມ) ເວລານັ້ນເຫຼືອແຕ່ຊາກສະຫຼັກ ຫັກພັງເກືອບໝົດແລ້ວ ທີ່ເຫຼືອຢູ່ປາກົດວ່າ ມີລວດລາຍວິຈິດງົດງາມຫຼາຍ ສ່ວນ ສິມພຸດທະວົງສ໌ທີ່ເປັນສິມເກົ່າແກ່ຍັງເປັນຊາກ ຢູ່ໃນສວນ ຂອງພໍ່ມຸກ ເວລານັ້ນ ສໍ່ສະແດງໃຫ້ເຫັນ ສິນລະປະກຳສີໄມ້ລາຍມືອັນປານີດຂອງບັນພະບູລຸດພວກ ເຮົາ ແຕ່ສະໄໝບູຮານ ເມື່ອໄດ້ພົບເຫັນແລ້ວກໍ່ເປັນໜ້າເຄົ້າລົບເຫຼື້ອມໃສ ແລະ ເປັນໜ້າສັງເວດສະຫຼົດໃຈ ທີ່ປ່ອຍໃຫ້ ມໍລະດົກອັນລ້ຳຄ່າຂອງພວກເຮົາໄດ້ ເສື່ອມສູນໄປເຊັ່ນນີ້ ສົມຄວນແລ້ວທີ່ພວກເຮົາຈະຕ້ອງພາກັນຟື້ນຟູພັດທະນາ.

ອັນນຶ່ງ ວັດນີ້ໄດ້ມີບໍລິເວນກວ້າງຍາວ ດ້ານລະ 1 ຫຼັກກິໂລແມັດມົນທົນ ມີຫຼັກຫີນສີລາປັກໄວ້ກຳໜົດ ເປັນເຂດ.

ໃນປີ ພ.ສ 2489 ພຣະອາຈານມະຫາປານ ໄດ້ສົ່ງພຣະສົງສາມະເນນ ມາປະຈຳຢູ່ ເພື່ອພໍ່ຳເພັງສະມະນະທັມ ເພາະເປັນສະຖານທີ່ ສະຫງັດ ວິເວກ ເໝາະ ສົມກັບ ເປັນ ສຳນັກ ວິ ປັ ດ ສະ ນາ ກັ ມ ມະ ຖານ ເມື່ອ ເປັ ນ ເຊັ່ ນ ນັ ້ ນ ຈຶ ່ ງ ໄ ດ ້ ໄ ປ ສ ະ ເ ໜີ ນ ຳ ທ່ານ ພະ ຍ າ ຄ ຳ ມ ້ າ ວ ວິ ໄ ລ ສ ະ ໄ ໝ ດ ຳ ລ ົ ງ ຕ ຳ ແ ໜ ່ ງ ລ ັ ດ ຖ ະ ມ ົ ນ ຕ ີ ກ ະ ຊ ວ ງ ທ ັ ມ ມ ະ ກ ານ

ທາງກະຊວງຈຶ່ງໄດ້ສັ່ງໃຫ້ເຈົ້າໜ້າທີ່ ຂອງກະຊວງ ມາສຳຫຼວດເບິ່ງ ກໍເຫັນວ່າເປັນວັດເກົ່າແກ່ແລະສຳຄັນດັ່ງກ່າວແລ້ວຈຶ່ງໄດ້ໄປນິມົນເພີ່ນ ເຊິ່ງເວລານັ້ນໄດ້ພຳນັກຢູ່ທີ່ວັດສະຫວ່າງສ້າງນາງ ເພີ່ນໄດ້ຮັບຄຳນິມົນດ້ວຍຄວາມຍິນດີ ດັ່ງນັ້ນເພີ່ນຈຶ່ງໄດ້ສົ່ງພຣະສົງ 4 ຮູບມາປະຈຳຢູ່ກ່ອນ ແລະໃນປີນີ້ເອງ ເພີ່ນໄດ້ເປີດສຳນັກວິປັດສະນາກັມມະຖານທີ່ ວັດບຸບຜາວິປັດສະນາຣາມ ເມືອງຫຼວງພະບາງ.

ຕົກມາຮອດ ພ.ສ 2499 ພຣະສົງ 4 ອົງ ທີ່ເພີ່ນສົ່ງມາປະຈຳຢູ່ນັ້ນ ກໍໄດ້ລົງມືແຜ້ວຖາງ ສ້າງສາ ມາໂດຍລຳດັບ ເພີ່ນກໍໄດ້ອອກມາຍ້ຽມຢາມຢູ່ເປັນປະຈຳ ພ້ອມກັບເລີ່ມສ້າງກຸຕິກັມມະຖານ.

ປີ ພ.ສ 2500 ວັນທີ່ 25 ຕຸລາ ພຣະອາຈານມະຫາປານ ອານັນໂທ ຈຶ່ງໄດ້ອອກມາຢູ່ປະຈຳ ແລະໄດ້ຈັດຕັ້ງ ສຳນັກວິປັດສະນາກັມມະຖານ ເປີດສອນພຣະອະພິທັມຕັ້ງແຕ່ບັດນັ້ນເປັນຕົ້ນມາ ແລະໄດ້ສົ່ງພຣະລູກສິດໄປຮຽນພຣະອະພິທັມທີ່ບາງກອກອີກດ້ວຍ ໃນປີນີ້ການສ້າງສາພັດທະນາກ້າວໜ້າຫຼາຍ ໄດ້ມີຜູ້ມາສ້າງກຸຕິຖວາຍ ເປັນກຸຕິຫຼັງໃຫຍ່ ນອກນັ້ນຍັງໄດ້ສ້າງຫໍແຈກໃຫ້ເປັນສະຖານທີ່ພຳພັງກຸສົນ ເອົາລົດມາໄຖ ຫົນທາງເຂົ້າວັດແລະໄດ້ສ້າງຫໍໄຫວ້ພຣະຂຶ້ນອີກ ປະຕິສັງຂອນພັດທະສີມາເກົ່າ(ສະໄໝພຣະຄຣູໂພນສະເນັກ) ໂດຍໄດ້ຂໍອະນຸຍາດຈາກກະຊວງທັມມະການຮັບຮູ້ ແລະອະນຸຍາດໃຫ້ຕາມຄວາມປະສົງ ແລະຍັງໄດ້ອ້ອມຮົ້ວວັດຕາມເຂດແດນທີ່ໄດ້ປັກ ໝາຍໄວ້ໃຫ້ເປັນເຂດວັດທີ່ຂາດອອກຈາກດິນບ້ານໂດຍສິ້ນເຊີງ.

ປີ ພ.ສ 2501-2502 ທັງດ້ານການກໍ່ສ້າງ ແລະການສຶກສາ ນັບວ່າຈະເລີນຂຶ້ນຕາມລຳດັບ ມີຍາດໂຍມ ທີ່ມີຈິດສັດທາມາສ້າງກຸຕິທີ່ພັກຂອງພຣະພິກຂຸສາມະເນນຫຼາຍຫຼັງ ແລະຍັງມີຍາດໂຍມລາງຄົນໄດ້ສະລະໂອກາດ ພຳເພັງທານ ຮັກສາສິນ ແລະພາວະນາເປັນຈຳນວນຫຼາຍ ລາງຄົນກໍມາຢູ່ປະຈຳ ລາງຄົນກໍມາຢູ່ເປັນຄັ້ງຄາວ ໃນວັນສິນວັນພຣະ ຕາມຮີດຄອງປະເພນີ

3.ຍຸກຟື້ນຊີບ ພ.ສ 2513,ຄ.ສ 1970 ມາເຖິງປັດຈຸບັນ.

ຫຼັງຈາກທີ່ ພຣະອາຈານ ມະຫາປານ ອານັນໂທ ໄດ້ມໍລະນະພາບລົງ ໃນວັນທີ່ 18/11/1968 ໃນໄລຍະທຳອິດທາງຄະນະຈັດຕັ້ງ ທັງພຣະສົງ ແລະຄາລະວາດ ໄດ້ມີມະຕິແຕ່ງຕັ້ງໃຫ້ມີຜູ້ຮັກສາການຊົ່ວຄາວ ໂດຍມີການຜັດປ່ຽນກັນຂຶ້ນເປັນ ຈົນກວ່າຈະມີການຈູດສົບຂອງ ພຣະອາຈານ ໃຫ້ແຕ່ລະອົງທີ່ຂຶ້ນມາຮັບຜິດຊອບນັ້ນ ຢູ່ພາຍໃນນຶ່ງປີແລ້ວຈຶ່ງໃຫ້ອົງອື່ນຂຶ້ນແທນ ເຊິ່ງປະກອບມີ:

1. ພຣະອາຈານ ມະຫາບຸນເລີ່ງ ເຈົ້າອະທິການວັດສາລາແດງ ທີ່ເປັນເຈົ້າຄະນະຕາແສງໃນເວລານັ້ນ.

2. ຍາທ່ານ ພຣະມະຫາສົມບູນ ວັດຈອມແກ້ວ ແຂວງສະຫວັນນະເຂດ.

3. ຍາທ່ານ ອຸເທດ ວັດນາໂບ ເຈົ້າຄະນະແຂວງຄຳມ່ວນ.

4. ເລຂາສົມເດັດພຣະສັງຄະຣາຊ ຄື ສາທຸຝັ້ນ.

ຫຼັງຈາກທີ່ທາງຝ່າຍບ້ານເມືອງໄດ້ເຂົ້າມາເຕົ້າໂຮມກັນທັງສອງຝ່າຍ (ຝ່າຍແນວລາວຮັກຊາດ ແລະຝ່າຍວຽງຈັນ) ຄະນະການນຳທັງຝ່າຍພຣະສົງ ແລະຄາລະວາດ ຈຶ່ງໄດ້ຄົ້ນຄວ້າກັນກ່ຽວກັບສົບ ຂອງພຣະອາຈານ ວ່າຈະຕ້ອງມີການທຳພິທີວາງເພີ່ງສົບໃຫ້ກັບພຣະອາຈານ ທາງຄະນະຮັບຜິດຊອບ ຈັດຕັ້ງໃນພິທີຈົ່ງເຫັນດີໃຫ້ມີການເລືອກຕັ້ງ ເອົາເຈົ້າອະທິການວັດ ເພື່ອມາຮັບຜິດຊອບການຈັດພິທີດັ່ງກ່າວ ຕາມລະບຽບການໃນເວລານັ້ນ.

ໃນປີ ພ.ສ 2517 (ຄ.ສ 1974) ພຣະອາຈານ ຊາລີ ກັນຕະສີໂລ ໄດ້ຮັບການເລືອກຕັ້ງຂຶ້ນເປັນ ເຈົ້າອະທິການ ແລະໄດ້ສືບຕໍ່ການກໍ່ສ້າງສາລາໂຮງທັມຫຼັງປັດຈຸບັນໃຫ້ສຳເລັດ ແລະໄດ້ສ້າງກຸຕິ ທີ່ອາຈານຢູ່ເວລານີ້ ນອກຈາກການສ້າງສາແລ້ວ ກິດຈະການທີ່ພຣະອາຈານມະຫາປານ ໄດ້ປະໄວ້ໃຫ້ສືບທອດຕໍ່ນັ້ນ ແມ່ນເພີ່ນໄດ້ດຳເນີນມາຕາມສະພາບການປ່ຽນແປງ ຂອງບ້ານເມືອງ ທີ່ກຳລັງຕໍ່ສູ້ເພື່ອປົດປ່ອຍ ປະເທດຊາດໃນເວລານັ້ນ ບາງກິດຈະການແມ່ນເພີ່ນໃຫ້ຢຸດໄວ້ຊົ່ວຄາວຄື ການເຄື່ອນໄຫວວຽກງານ ວິປັດສະນາກັມມະຖານ ແລະການສອນພຣະອະພິທຳ ບັນດາສິດສານຸສິດ ທີ່ເຄີຍຮ່ວມ ງານນຳພຣະອາຈານໃນເມື່ອກ່ອນ ສ່ວນໃຫຍ່ແມ່ນໄດ້ໄປປະກອບອາຊີບ ທີ່ຕົນເອງເລືອກ ສ່ວນທີ່ຍັງຢູ່ກໍ ໄດ້ຮ່ວມວຽກງານ ຕາມສະພາວະຄວາມເໝາະສົມໃນໜ້າວຽກທີ່ມີຢູ່

ເປັນເວລາ 10 ກວ່າປີ ຜ່ານມາ ຫຼັງຈາກທີ່ປະເທດຊາດໄດ້ຮັບການປົດປ່ອຍໃນປີ 1975 ມາຮອດປີ ຄ.ສ 1984 ສະພາບການສຶກສາຂອງພຣະສົງສາມະເນນ ໄດ້ມີຜົນສະທ້ອນຕໍ່ພຣະພຸດທະສາສະໜາ ເນື່ອງຈາກວ່າການປັບປຸງການສຶກສາໃນໄລຍະໃໝ່ ເວລານັ້ນທາງກະຊວງສຶກສາໄດ້ໃຊ້ຫຼັກສູດສາມັນສຶກສາ ປ່ຽນແທນຫຼັກສູດ ພຣະປະຣິຍັດຕິທັມ ໃນທາງພຣະພຸດທະສາສະໜາໃນເມື່ອກ່ອນ ຈຶ່ງເຮັດໃຫ້ພຣະສົງສາມະເນນ ບໍ່ໄດ້ສຶກສາພຣະທັມວິໄນ ໃນເວລານັ້ນແມ່ນທ່ານ ພູມີ ວົງວິຈິດ ເປັນລັດຖະມົນຕີກະຊວງສຶກສາ ແລະທັມມະການ ໄດ້ຮູ້ສະພາບຈາກບັດສົນເທ່ ກ່ຽວກັບແນວຄິດທໍ້ຖອຍຂອງພຣະ

ສົງສາມະເນນຕໍ່ພຣະທັມວິໄນ ມີທ່າອຽງໄປຄືກັບ ຊາວບ້ານ ເພີ່ນຈົ່ງໄດ້ນິມົນ ພຣະອາຈານ ຊາລີ ກັນຕະສີໂລ ແລະທ່ານມະຫາຄຳຕັນ ເທບບົວລີ (ເປັນປະທານ ອົງການ ພ.ສ.ລ) ເຂົ້າໄປທີ່ກະຊວງເວລານັ້ນ ໄດ້ປາລົບເຖິງສະພາບດັ່ງກ່າວ ແລະໄດ້ຮູ້ສາເຫດ ພ້ອມທັງໃຫ້ຂໍ້ສະເໜີຕໍ່ພຣະອາຈານວ່າ ໃຫ້ສືບຕໍ່ເຄື່ອນໄຫວ ວິປັດສະນາກັມມະຖານທີ່ເຄີຍປະຕິບັດຜ່ານມາ ເຊິ່ງບໍ່ມີລາຍລັກອັກສອນເລີຍ ທາງພຣະອາຈານ ຈົ່ງໄດ້ນຳເອົາຄວາມດັ່ງກ່າວມາຜັນຂະຫຍາຍ ຕໍ່ຄະນະສົງ ແລະໄດ້ເຄື່ອນໄຫວພາຍໃຕ້ການຕິດຕາມກວດກາຢ່າງໃກ້ຊິດ ຂອງພັກລັດ ເປັນ ໄລຍະເວລາ 10 ກວ່າປີໄດ້.

ພຣະອາຈານ ຊາລີ ກັນຕະສີໂລ ໄດ້ສືບຕໍ່ກິດຈະການຂອງ ພຣະອາ ຈານ ມະຫາປານ ມາເຖິງປັດຈຸບັນ ໄດ້ມອບໃຫ້ພຣະອາຈານພົມ ມາເປັນເຈົ້າອະ ທິການແທນ

ສ່ວນພຣະອາຈານ ຊາລີ ກັນຕະສີໂລ ໄດ້ຂະຫຍາຍ ວຽກງານວິປັດສະນາ ກັມມະຖານອອກໄປຕາມທີ່ຕ່າງໆ ທັງຢູ່ໃນນະຄອນຫຼວງ ແລະຕ່າງແຂວງ ຜ່ານການເຄື່ອນໄຫວແລ້ວ ກໍມີທາງສຽງທັງບວກ ແລະລົບແຕ່ການຍອມຮັບ ເປັນສ່ວນຫຼາຍ ເມື່ອເປັນດັ່ງນັ້ນ ໃນປີ 2003ເພີ່ນຈົ່ງໄດ້ກໍ່ຕັ້ງ ໂຄງການ “ພຸດທະ ສາສະໜາເພື່ອການພັດທະນາ (ຄ.ພ.ພ)” ຂຶ້ນ ເພື່ອເປັນ ການສືບທອດເຈຕະນາ ລົມຂອງພຣະອາຈານມະຫາປານ ອານັນໂທ ແລະໄດ້ ຂະຫຍາຍວຽກງານທີ່ເຄີຍ ມີມາໃນເມື່ອກ່ອນ ກັບມາມີຊີວິດຊີວາ ສະແດງບົດບາດ ໃນສັງຄົມໃຫ້ນັບມື້ນັບ ກວ້າງຂວາງອອກໄປ.

ຊີວິດ ແລະຜົນງານຂອງພຣະອາຈານ ມະຫາປານ ອານັນໂທ

ອະດີດ ເຈົ້າສຳນັກ ວັດມະຫາພຸດທະວົງສາປ່າຫຼວງ

ພຣະອາຈານມະຫາປານ ອານັນໂທ ເຖິງແມ່ນວ່າ ເກີດໃນຍຸກຫຼັງ ພຣະຣາຊະຄຣູ ໂພນສະເນັກປະມານສາມຮ້ອຍກວ່າປີ ແລະມີຄວາມແຕກຕ່າງກັນ ທາງດ້ານຍຸກສະໄໝແຫ່ງຄວາມປ່ຽນແປງຂອງສັງຄົມມະນຸດ ພ້ອມທັງຫຼາຍໆຢ່າງ ໄດ້ຖືກຫຼົງລືມຂາດການສືບທອດມາໃນໄລຍະນຶ່ງ ຈຶ່ງໄດ້ມີວິນຍູຊົນທີ່ມີອຸດົມການ ແລະຄວາມເສຍສະຫຼະ ມາສືບທອດມູນເຊື້ອທີ່ຊົງຄຸນຄ່າ ແຫ່ງຂະບວນການ ໃຊ້ຫຼັກພຸດທະທັມນຳພາຈິດໃຈ ຂອງບັນດາພຸດທະສານິກກະຊົນ ຕາມເຈຕະນາ ລົມຂອງພຣະອາຈານຄົ້ຫວັງ ເພື່ອປະໂຫຍດເກື້ອກູນມວນມະນຸດ ແລະເພື່ອສົ່ງ ເຄາະສັງຄົມໂລກ (ຈະຣະຖະ ພິກຂະເວ ຈາຣິກັງ ພະຫຸຊະນະຫິຕາຍະ ५ລ५) ສິ່ງດັ່ງກ່າວນີ້ ໄດ້ເປັນເຄື່ອງໝາຍສະແດງເຖິງຄຸນລັກສະນະທີ່ເໝືອນກັນກັບໃນ ອະດີດເຄີຍມີມາ.

ໂອກາດນີ້ ຂໍມາເວົ້າ ເຖິງຄຸນຄວາມດີຂອງທ່ານພຣະຈານ ມະຫາປານ ອານັນໂທ ອົງນີ້ກ່ອນວ່າ ເປັນດ້ວຍເຫດໃດ ບັນດາລູກສິດລູກຫາ ຄູບາອາຈານ ຕະຫຼອດເຖິງຍາດໂຍມຜູ້ອຸປະຖຳທັງຫຼາຍ ຈຶ່ງມີຄວາມເຫຼື້ອມໃສສັດທາໃນທ່ານ ທ່ານມີຄວາມໜ້າເຫຼື້ອມໃສຢ່າງໃດແດ່ ແລະມີຄຸນະທັມແນວໃດ? ພໍເປັນຫຼັກໃຫ້ ຄົນໄຫວ້ນົບສັກການະບູຊາຢ່າງບໍ່ຈືດຈາງ.

ຄຸນນະທຳອັນນີ້ ຈາກສຽງຂອງສິດສານຸສິດທັງຫຼາຍສົ່ງສຽງມາວ່າ ພຣະ ອາຈານ ມະຫາປານ ອານັນໂທ ມີຄຸນະທັມທີ່ໄຫເຮົາພຸດທະບໍລິສັດ ແລະຜູ້ສົນໃຈ ໃນທັມທັງຫຼາຍຄວນຈະປະພຶດປະຕິບັດຕາມ ຄື:

1. ທ່ານເປັນຜູ້ຮູ້ຈັກເຫດ ເປັນຕົ້ນວ່າຮູ້ຈັກເຫດແຫ່ງສຸກເກີດ ແລະ ເຫດ ແຫ່ງທຸກເກີດຊຶ່ງຮຽກວ່າ ທັມມະຕັນຍຸຕາ.

2. ທ່ານຮູ້ຈັກຜົນວ່າ ຄວາມສຸກອັນນີ້ ເນື່ອງມາຈາກເຫດອັນນັ້ນ ແລະ ຄວາມທຸກອັນນີ້ ເນື່ອງມາຈາກເຫດອັນນັ້ນ ຮຽກວ່າ ຮູ້ອັດຖັນຍຸຕາເປັນຜູ້ຮູ້ຈັກຜົນ.

3. ທ່ານຮູ້ວ່າ ເຮົາມີຊາດຕະກຸນ ຍົດສັກ ບໍລິວານ ຄວາມຮູ້ຄວາມສາມາດ ພຽງເທົ່ານີ້ ແລ້ວທ່ານຈະປະກອບກິດຈະການຕາມຖານະຄວາມຮູ້, ຄວາມສາ ມາດຂອງທ່ານຢ່າງບໍ່ລົດລະຮຽກວ່າ ອັດຕັນຍຸຕາ ຮູ້ຈັກຕົນ.

4. ທ່ານຮູ້ຊີວິດຂອງຄົນ ແລະສັດທົ່ວໄປ ໃນການລ້ຽງຊີບແລ້ວປະກອບ ຕົນເປັນຄົນຮູ້ຈັກປະມານໃນການລ້ຽງຊີບ ແລະ ການຂົບສັນຂອງເພີ່ນໃຫ້ພໍດີພໍ ຄວນຮຽກວ່າ ມັດຕັນຍຸຕາ

5.ທ່ານຮູ້ຈັກປະມານໃນການປະກອບກິດຈະການງານຕ່າງໆຢ່າງໄດ້ຜົນ

ຮຽກว่า ກาลันยุตา ຄືຮູ້ຈັກກาละเวลา.

6.ท่านรู้จักเอิาใจคົน ในที่ชุมช
 และกานปะติบัดต่ที่ชุมชนรฺกว่า ปริสันยุตา.

7.ท่านรู้จัก ເລືອກหาบุกคนที่ถวนแนะนำพ่ำสอน และบุกคนที่ถวนคบหาสะมาคมซึ่งรฺก ว่า ปุกคะละปะโรปะรันยุตา ຮູ້ຈັກເລືອກหาบุกคนที่ถวนคบ.

นอกจากนี้ ท่านยังเป็นผู่เชื่อหมั่นในทำคำสอน ของอิงสัมมาสัมพุดทะเจ้า ย่างถวายตัว ເປັນຜູ່ຮັບໃຊ້ພຣະພຸດທະເຈົ້າຢ່າງເອົາໃຈໃສ່ ท่านเป็นผู่ละอายต่บาบกัม ກົວຕໍ່ບາບຄືບໍ່ທຳສິ່ງທີ່ບໍ່ເປັນກຸສົນ ເປັນຜູ່ໄດ້ສຶກສາຮ່ຳຮຽນມາກພໍຄວນ ท่านมีถวามพูนย่างแรงก้า ມີໃຈໝັ້ນຄົງຕໍ່ຫຼັກທຳພຣະພຸດທະສາສະໜາມີສະຕິ ຜະຫຍາປັນຍາຮອບຮູ້ ໜ້າເຄົາລົບ ແລະບູຊາ.

ท่านปึกสาหาลิสิ่งใดบ่เป็นไปเพื่อถวามบูดบูนตัน ແລະຄົນອື່ນ ຈະຄິດສິ່ງໃດ ບໍ່ເປັນການບູດບູນຕົນ ແລະຄົນອື່ນ ຈະເວົ້າສິ່ງໃດ ບໍ່ໃຫ້ກະທົບ ຈິດຕົນແລະຄົນອື່ນຈະທຳສິ່ງໃດ ບໍ່ເປັນການອິດສາ ແລະບັງບູດຄົນອື່ນມີຄວາມ ເຫັນຊອບ ແລະເຊື່ອຕາມຜົນກັມຈິງໆ.

ท่านเป็นนักเสยสะขูะ ເອື້ອເຟື້ອເພື່ອແຜ່ແກ່ບັນດາສິດສານຸສິດ ຕະ ຫຼອດເຖິງພຸດທະບໍລິສັດ ทุกถ้อนหน้า ท่านมีเมดตาสูงส่ำหน้าเคົาลົບບູຊາຍິ່ງ.



ຊີວິດໃນເບື້ອງຕົ້ນ ແລະຕະກູນ

ຊາຕະ	25 ຕຸລາ ຄ.ສ. 1911
ມໍລະນະ	18 ພຶດສະພາ 1968
ຊົນມາຍຸ (ອາຍຸ) ໄດ້	58 ປີ
ເພດຄາລະວາດ	17 ປີ
ບວດເປັນເນນ	3 ພັນສາ
ອຸປະສົມບົດເປັນພຣະ	38 ພັນສາ

ພຣະອາຈານ ມະຫາປານ ອານັນໂທນາມເດີມຊື່ ທ້າວປານ ແກ້ວຊົມພູ ພູມເດີມ ບ້ານເມືອງພ້ອງ ຕາແສງເມືອງພ້ອງ ເມືອງສອງຄອນ(ລະຫານ້ຳ) ແຂວງ ສະຫວັນ ນະເຂດ ບິດາຊື່ວ່າ ທິດແສນ ແກ້ວຊົມພູ (ເພຍເມືອງແສນ), ມານດາຊື່ ນາງ ແຕ້ມ.

ເກີດທີ່ບ້ານ ອະຫໍໂຄກ ຫ່າງຈາກເມືອງພ້ອງ ສອງຫວ່າງກິໂລແມັດ ເກີດວັນພຸດ ຂຶ້ນ 4 ຄ່ຳ ເດືອນ 12 ປີກຸນ ພ.ສ 2454, ກົງກັບວັນທີ່ 25 ຕຸລາ ຄ.ສ 1911, ເວລາ 7 ໂມງເຊົ້າ, ມີອ້າຍນ້ອງຮ່ວມທ້ອງດຽວກັນ 4 ຄົນຄື:

1. ນາງ ເໝັ້ນ
2. ນາງ ເຄນ
3. ທ້າວ ໂປງ
4. ທ້າວ ປານ (ທ່ານພຣະອາຈານ ມະຫາປານ ອານັນ ໂທ)

ມູນເຫດພາໃຫ້ໄປເກີດຢູ່ທີ່ ບ້ານອະຫໍໂຄກ

ເນື່ອງຈາກ ບິດາມານດາ ມີອາຊີບໃນການທຳນາເປັນພື້ນຖານ ບິດາ ມານດາ ມີນາຢູ່ພັ່ນນຶ່ງ ຢູ່ບ້ານອະຫໍ ໂຄກ ທຸກປີ ໃດຄັນ ເຖິງ ຍາມ ນາ ມາ ບິ ດ ານ ດ ານ ດ ານ ຈຳ ຕ້ ອ ງ ອົ ບ ພ ະ ຍົ ບ ຄ ອ ບ ຄົ ວ ໄ ປ ຢູ່ ກິ ນ ກັ ບ ນ າ ເ ພື ່ ອ ຄ ວ າ ມ ສ ະ ດ ວ ກ ແ ລ ະ ທັ ນ ຟ້ າ ທັ ນ ຝົ ນ ການ ຄົ ມ ມ ະ ນ າ ຄົ ມ ລ ະ ຫ ວ່ າ ງ ນ າ ກ ັ ບ ບ ້ ານ ຊ ົ ່ ວ ໄ ລ ຍ ະ 2 ຫ ຼ ັ ກ ກ ິ ໂ ລ ໃ ນ ສ ະ ໄ ໝ ນ ັ ້ ນ ຮ ູ ້ ສ ຶ ກ ວ ່ າ ໄ ກ ເ ພ າ ະ ປ ່ າ ທ ຶ ບ ດ ົ ງ ຫ ນ າ ບ ິ ດ ານ ດ ານ ດ ານ ຈ ຶ ່ ງ ຕ ັ ດ ສ ິ ນ ໃ ຈ ພ າ ຄ ອ ບ ຄ ົ ວ ລ ູ ກ ເ ມ ຍ

ໄປຕັ້ງບ້ານເຮືອນຢູ່ກັບນາ (ທີ່ບ້ານອະທໍໂຄກດຽວນີ້) ເວລານັ້ນ ບ້ານບ່ອນນີ້ມີປະມານສາມສີ່ຫຼັງຄາເຮືອນເທົ່ານັ້ນ.

ລູກຜູ່ສຸດທ້າວ່ງຂອງທິດແສນ ແກ້ວຊຸມພູ (ເພຍ ເມືອງແສນ) ແລະນາງແຕ້ມ ອັນມີຊື່ດົ່ງດັ່ງວ່າ ພຣະອາຈານ ມະຫາປານ ອານັນໂທ ໄດ້ຖືປະຕິສົນທິ ແລະຖືກຳເນີດຢູ່ກັບເຮືອນຫຼັງຕັ້ງໃໝ່ ທີ່ບ້ານອະທໍໂຄກນີ້.

ທ້າວປານ ໄດ້ຈະເລີນໄວຂຶ້ນມາຕາມລຳດັບ ຢູ່ກັບວຽກໄຮ່ການນາ ພາຍໃຕ້ການນຳພາຂອງບິດາມານດາ ແລະ ທ້າວຈານເຫຼື້ອມ ຜູ່ເປັນລຸງດູແລ.

ໜ້າທີ່ ແລະການງານເມື່ອເຕີບໂຕກໍ່ຄື ການລ້ຽງສັດ ຊ່ວຍພໍ່ແມ່ອ້າຍເອື້ອຍນ້ອງເປັນປະຈຳ ຈົນມີຈິດໃຈຮັກໄຄ່ ແລະຫວງແຫນສັດ ແພງຊີວິດສັດເໝືອນວ່າຊີວິດຂອງຕົນເອງ ທຸກວັນໃດຄ່ຳຈົ່ງເຫັນເຮືອນ ເພາະຕິດຕາມສັດທີ່ຕົນມີໜ້າທີ່ຮັກສາ

ດ້ວຍວ່າບ້ານອະທໍໂຄກເປັນບ້ານນ້ອຍໆຕັ້ງໃໝ່ (ແຍກອອກຈາກບ້ານເມືອງພ້ອງໄປ) ຢູ່ໃກ້ກັບປ່າຮົກດົງເສືອ ແຕ່ລະປີ ຈົ່ງມີງົວຄວາຍຂອງຊາວບ້ານຈຳນວນບໍ່ໜ້ອຍຖືກເສືອມາລ່າໄປເປັນອາຫານ. ທ້າວນ້ອຍປານເຕີບໃຫຍ່ມາໃນບັນຍາກາດແບບນີ້ ເຫັນສັດລ້ຽງທີ່ຕົນຮັບແພງຄຸ້ນເຄີຍຕາຍຈາກໄປຢ່າງທຸກທໍລະມານ ມີຄວາມດູຕົນສົງສານງົວຄວາຍຍິ່ງນັກ. ພໍໃຫຍ່ເປັນບ່າວແວງ ດ້ວຍຄວາມຢາກປົກປ້ອງສັດລ້ຽງຂອງຕົນ ໃຫ້ພົ້ນຈາກການຮາວີຂອງເສືອຮ້າຍ ບ່າວນ້ອຍຈົ່ງສະຫຼະຄວາມມ່ວນຊື່ນໃນຊີວິດໄວໜຸ່ມ ຂໍພໍ່ໄປຮຽນມົນປາບເສືອ ຈາກກຸລາ ໂດຍຜູ່ເປັນພໍ່ຕ້ອງໄດ້ເສຍຄວາຍຕູ້ຕົວນຶ່ງ ເພື່ອເປັນຄ່າຄາຍຮຽນມົນປາບເສືອ. ຈາກນັ້ນບ່າວນ້ອຍປານ ກໍທຳໜ້າທີ່ດູແລລ້ຽງສັດຊ່ວຍຄອບຄົວມາຢ່າງຕະຫຼອດປອດໄພ.

ໄຊກຊະຕາກັບຜ້າເຫຼືອງ

ໃນປີ ພ.ສ 2471 (ຄ.ສ 1928) ບິດາໄດ້ລົ້ມປ່ວຍໜັກ ຈົນເຖິງກັບເສຍຊີວິດຈາກລູກ ແລະເມຍໄປ, ບັນດາເອື້ອຍອ້າຍທັງຫຼາຍໄດ້ວິງວອນໃຫ້ທ້າວປານນ້ອງຫຼ້າອອກບວດ ເພື່ອຈູງພໍ່ ຕາມປະເພນີຖືວ່າ ການບວດຈູງພໍ່ແມ່ໃນເວລາພໍ່ແມ່ເຖິງແກ່ກັນ (ເສຍຊີວິດ) ຄືຈູງພໍ່ແມ່ອອກຈາກອະບາຍ.

ດ້ວຍຄວາມກະຕັນຍູກະຕະເວທີ ລູກທີ່ດີຂອງພໍ່ແມ່ ນ້ອງທີ່ດີຂອງເອື້ອຍອ້າຍທັງຫຼາຍ ທ້າວປານ ຈົ່ງໄດ້ສະຫຼະວຽກການ ແລະສັດລ້ຽງທີ່ຫວງຮັກ ອອກບວດແທນຄຸນບິດາ ຢູ່ທີ່ວັດເມືອງພ້ອງ.

ເບື້ອງຕົ້ນ ກໍຄິດວ່າຈະບວດເປັນພິທີ ພໍຈູງພໍ່ຮອດປ່າຊ້າ ກັບຄືນມາ ກໍ່ຈະສຶກ ແຕ່ພໍບວດແລ້ວ ເອື້ອຍອ້າຍທັງຫຼາຍ ຈຶ່ງໄຫວ້ວອນໃຫ້ຢູ່ຕໍ່ອີກ ວ່າ ຂໍໃຫ້ຮອດມື້ແຈກ ຫຼືໄດ້ເຈັດວັນກ່ອນຈຶ່ງສຶກ ທ່ານກໍຟັງໄປ ພໍຮອດເຈັດວັນຜ່ານໄປ ຈິດໃຈຂອງທ່ານກໍປ່ຽນແປງທັນທີວ່າ ຈະຕ້ອງສວຍໂອກາດສຶກສາຮ່ຳຮຽນພໍອ່ານ ອອກ ຂຽນໄດ້ເສຍກ່ອນ ຈຶ່ງຈະສຶກ.

ການສຶກສາ ແລະສະແຫວງຫາເປົ້າໝາຍຊີວິດ

ໃນສະໄໝນັ້ນ ການສຶກສາທາງຝ່າຍໂລກບໍ່ທັນຈະເລີນ ໂຮງຮຽນບໍ່ທັນ ມີທົ່ວເຖິງ ທ່ານຈຶ່ງອາໃສຜ້າ ກາສາວະພັດ ເປັນບ່ອນການສຶກສາ ເປັນໂຮງຮຽນ ກິນນອນ.

ການຮຽນກໍຄື ການຮຽນສູດ ຮຽນເທດ ຮຽນໄຫວ້ພຣະສູດມົນ ຮຽນໂຕທັມ ມີໜັງສື ປັນຍາປາລະມີ, ອຸນຫັດສະວິໄຊ ເປັນຕົ້ນ ໃນໃບລານເປັນປຶ້ມອ່ານ ແລະປຶ້ມເທດ ນອກນີ້ກໍ່ແມ່ນການຮຽນ ສູດມົນນ້ອຍ, ມົນກາງ ຈາກພຣະອຸປັດຊາ ອາຈານຄື ຍາທ່ານ ຈູມ ເຈົ້າຄະນະຕາແສງເມືອງພ້ອງ.

ສາມປີຜ່ານມາ ການສຶກສາຮຽນຮູ້ໃນຄອງພຸດທະສາສະໜາ ຮູ້ສຶກວ່າ ໂລ່ງອົກໂລ່ງໃຈ ແລະຮຽນໄດ້ທຽມທັນ ກັບເພື່ອນບັນພະຊິດດ້ວຍກັນ ໃນວັດ.

ໃນປີ ພ.ສ 2474 (ຄ.ສ 1931) ອາຍຸຂອງ ສາມະເນນ ປານ ກໍພໍດີເຂົ້າຂວບ 20 ປີເຕັມບໍລິບູນ ຄູບາອາຈານທັງຫຼາຍ ຈຶ່ງໄດ້ອະນຸຍາດໃຫ້ອຸປະສົມບົດເປັນ ພຣະພິກຂຸ ປານ ໃນພຣະພຸດທະສາສະໜາ ໂດຍມີ:

ຍາທ່ານ ທາ ວັດບ້ານຕາໂນນ ເປັນພຣະອຸປັດຊາ

ຍາທ່ານ ຈູມ ເຈົ້າຄະນະຕາແສງເມືອງພ້ອງ ເປັນພຣະກັມມະວາຈາກໍ້ ຂວາ

ຍາທ່ານ ສົ້ວ ເຈົ້າອະທິການວັດບົງຊ້າງ ເປັນພຣະກັມມະວາຈາກໍ້ຊ້າຍ ພ້ອມຄະນະພຣະສົງ 21 ອົງ ນັ່ງທັດຖະບາດໃນພັດທະສີມາວັດເມືອງພ້ອງ ອຸປະ ສົມບົດສຳເລັດເປັນພຣະພິກຂຸເວລາ 12 ໂມງ ມີນາມວ່າ ພຣະ ປານ ໂດຍແມ່ນ ຍາທ່ານເກດ ເປັນເຈົ້າມູນສັດທາຜູ້ສ້າງກອງບວດ.

ເມື່ອອຸປະສົມບົດເປັນພຣະພິກຂຸ

ຫຼັງຈາກໄດ້ເລື່ອນຖານະຈາກ ທ້າວ ປານ ມາເປັນສາມະເນນ ປານ ແລະຈາກສາມະເນນ ປານ ເປັນພຣະພິກຂຸ ປານແລ້ວ ຄວາມນຶກຄິດຍິ່ງແຕກຕ່າງ ກະຈ່າງອອກໄປອີກว່າ ຈຳເປັນຢ່າງຍິ່ງຈະຕ້ອງສຶກສາຫາວິຊາ ຄວາມຮູ້ໃສ່ຕົນ ພໍຄວນກ່ອນຈຶ່ງສິກ ເມື່ອຄວາມນຶກຄິດນີ້ເກີດຂຶ້ນກໍເລີຍເປັນປະນິທານຕັ້ງຄວາມ ປາຖະໜາໃນໃຈ ສາມຂໍ້ວ່າ:

1. ຈະຕ້ອງຮຽນເປັນພຣະນັກເທດ (ເທດສຽງ)
2. ຈະຮຽນມູນກະຈາຍະນະ (ຮຽນມູນເດີມ)
3. ຖ້າບໍ່ເຖິງ 4 ປີ ຄົບເສົາຕຽງຕາມບູຮານເພີ່ນว່າຈະບໍ່ສິກ ທັງນີ້ກໍ່ ເພື່ອว່າ ຖ້າສິກອອກມາ ຈະຕ້ອງເປັນ ໝໍລຳແກ້ໂຈດໃຫ້ຊະນະໃຈຄົນ ຖ້າສິກອອກມາກ່ອນ ບໍ່ທັນຄົບ 4 ປີ ເຂົາຈະວ່າຂວັນນິນທາว່າ ບວດເປັນພຣະເພື່ອຫວັງກອງບຸນ

ເມື່ອໄດ້ປະນິທານຕົນດັ່ງນີ້ແລ້ວ ຈຶ່ງໄດ້ໄປປຶກສາຫາລືກັບພຣະພອນ (ມະຫາພອນ ຫົວໜ້າສານປະນອມ ເມືອງພັນທະບູນ) ເພາະພຣະພອນເປັນ ຜູ້ບວດກ່ອນ ວ່າ ເຮົາຈະໄປສຶກສາທີ່ໃດຈຶ່ງຈະໄດ້ເປັນຜູ້ເທດເກັ່ງ ພຣະພອນ ຈຶ່ງໃຫ້ຄວາມເຫັນว່າ ກໍມີແຕ່ເມືອງໄທຟາກຂອງພຸ້ນແຫຼ້ວ.

ຖ້າດັ່ງນັ້ນ ເຮົາພາກັນລາຄູບາອາຈານ ໄປຫາສຶກສາບໍ່ດີບໍ? ວ່າແລ້ວພຣະ ພອນກໍຕົກລົງເຫັນພ້ອມ ຈຶ່ງໄດ້ ພາກັນເຂົ້າໄຫວ້ຄູບາໃຫຍ່ຄື ຍາທ່ານຈູມ ເຈົ້າຄະນະຕາແສງ ເພີ່ນກໍເຫັນດີນຳ ຂໍໂມທະນາ.

ເມື່ອໄດ້ຮັບອະນຸຍາດຈາກຄູບາອາຈານຜູ້ໃກ້ຊິດໄດ້ຮຽບຮ້ອຍແລ້ວ ທັງສອງອົງຄື ພຣະພອນ ແລະພຣະ ປານ ຈຶ່ງໄດ້ພ້ອມກັນລາອອກຕົນຍາດໂຍມ ອອກຈາກວັດບ້ານເມືອງພ້ອງ ໃນມື້ເດືອນ 6 ອອກໃໝ່ ເປັນມື້ເດີນທາງ ໄດ້ມຸ່ງໜ້າ ມາທາງເມືອງສອງຄອນ ເພື່ອອຳລາຍາທ່ານນິນ ເຈົ້າຄະນະ ເມືອງສອງຄອນ ແລະ ເພື່ອທຳຄວາມຄາລະວະ ຂໍ້ຄິດຈາກເພີ່ນ ໄດ້ມາພັກເຊົາ ນຳຍາທ່ານນິນ ນຶ່ງຄືນກໍພາກັນເດີນທາງຕໍ່ໄປ.

ໄປເຖິງ *ບ້ານຫົວດອນ* ອຳເພີເຂມະຣາຊ ປະເທດໄທ ເດືອນອອກໃໝ່ 13 ຄ່ຳ ຈຶ່ງພົບກັບພຣະທັມ ເຊິ່ງເປັນຄົນບ້ານນຶ່ງເມືອງດຽວກັນໄດ້ ເດີນທາງໄປ ຈຳພັນສາຢູ່ວັດນີ້ກ່ອນ ພຣະທັມຈຶ່ງນຳພາ ພຣະປານ ໄປຝາກໄວ້ນຳຍາທ່ານເຄນ *ບ້ານທ່ອນ* (ເພື່ອຮຽນເອົາຫຼັກສູດມູນກະຈາຍະນະ ຈາກສຳນັກຍາທ່ານເຄນກ່ອນ ຈຶ່ງໄດ້ໄປຮຽນນຳຍາທ່ານສິງ *ບ້ານບໍ່ຫີນ ຈັງຫວັດອຸບົນ*).

ໃນປີ ພ.ສ 2475 ໄດ້ໄປຈຳພັນສາຢູ່ *ບ້ານເສົາລົກ*

ໃນປີ ພ.ສ 2476 ໄດ້ໄປຈຳພັນສາຢູ່ນຳຍາທ່ານຄຳ *ບ້ານໜອງຊ້າງນ້ອຍ* ອຳເພີມ່ວງ (ເພື່ອຮຽນ ແປຫຼັກສູດມູນກະຈາຍະນະ) ສິ້ນໄຕຣມາດສາມເດືອນ ອອກພັນສາແລ້ວ ໄດ້ໄປຮຽນນຳອາຈານຊົ່ມ ບ້ານຕຳແຍ.

ໃນປີ ພ.ສ 2477 ໄດ້ໄປຈຳພັນສາຢູ່ *ບ້ານສີທວນ* ຕຳບົນສີທວນ ອຳເພີເຂື່ອງ ຈັງຫວັດອຸບົນ ນຳທ່ານ ອາຈານພູ (ເພື່ອແປຄຳພີທັງ 5 ອະພິທັມ).

ໃນປີ ພ.ສ 2478 ກັບຄືນຈຳພັນສາຢູ່ *ເມືອງພ້ອງ* ແລະພາກັນຈັດຕັ້ງ *ໂຮງຮຽນສອນມູນເດີມ*ຂຶ້ນທີ່ເມືອງພ້ອງ.

ໃນປີ ພ.ສ 2479 (ຄ.ສ 1936) ໄດ້ອອກຈາກເມືອງພ້ອງອີກເປັນເທື່ອທີ່ສອງ ເດີນທາງໄປຍັງ *ບ້ານຫົວດົງ* ອຳເພີບຸ່ງ (ອ.ອຳນາດຈະເລີນ) ເພື່ອຮຽນແປ ອະພິທັມຄຳພີທັງ 5 ຕື່ມອີກ ສິ້ນໄຕຣມາດສາມເດືອນ.

ໃນປີ ພ.ສ 2480 ໄດ້ກັບຄືນເມືອຈຳພັນສາຢູ່ເມືອງພ້ອງອີກ ພ້ອມດ້ວຍ ພຣະພອນ, ພຣະທັນ ເພື່ອປັບປຸງໂຮງຮຽນການສອນມູນເດີມ ມີພຣະຫຼາຍສຳນັກ ມາສຶກສາຮ່ຳຮຽນນຳ ໄດ້ສອນ ແລະເຜີຍແຜ່ວິຊາຄວາມຮູ້ ໃນວັດເມືອງພ້ອງ ສິ້ນໄຕຣມາດສາມເດືອນ ແລະແລ້ງນຶ່ງ ກໍໄດ້ພາກັນລາຄູບາອາຈານ ເດີນທາງມາ ຮຽນວິຊາຄວາມຮູ້ຕາມຫຼັກສູດສະໄໝໃໝ່ຕໍ່ທີ່ວຽງຈັນ.

ໃນປີ ພ.ສ 2481 (ຄ.ສ 1938) ພຣະປານ ພ້ອມດ້ວຍ ພຣະພອນ ແລະພຣະທັນ ໄດ້ເດີນທາງອອກຈາກເມືອງພ້ອງ ຂຶ້ນມາວຽງຈັນເພື່ອສຶກສາພຣະ ທັນວິໄນ ຕາມຫຼັກສູດ ພຣະປະຣິຍັດຕິທັມ ເຊິ່ງຈັດຂຶ້ນໂດຍສະພາພຸດທະບັນດິດ ຈັນທະບຸລີ ມີສົມເດັດ ເຈົ້າມະຫາອຸປະຣາຊ ເພັດຊະຣາຊເປັນປະທານຝ່າຍພຸດທະ ບັນດິດ ແລະເປັນຜູ້ໃຫ້ກຳເນີດໂຮງຮຽນປາລີ.

ຄະນະຂອງພວກເພີ່ນ ໄດ້ເດີນທາງເຖິງວຽງຈັນໃນເດືອນ 6 ເພັງ ໄດ້ມາ ພັກເຊົາຢູ່ວັດຊຽງຍືນ, ວັດພຣະໄຊ ເປັນການຊົ່ວຄາວ ແລ້ວໄປຈຳພັນສາຢູ່ວັດສີ ຖານເໜືອນຶ່ງພັນສາ ທຽວໄປຮຽນຢູ່ໂຮງຮຽນປາລີທີ່ວັດຈັນທະບຸຣີ, ສ່ວນພຣະ ພອນ ໄດ້ໄປຈຳພັນສາຢູ່ວັດໄຕ ແລະພຣະທັນ ຈຳພັນສາຢູ່ວັດອຸບມຸງ.

ໃນປີ ພ.ສ 2482 (ຄ.ສ 1939) ພຣະອາຈານ ມະຫາປານ ໄດ້ຈຳພັນສາຢູ່ວັດອຸບມຸງ ເວລານັ້ນ ພຣະທັງຄະນະມີ ພຣະທັນ ວິຣະວັງໂສ ທີ່ມີ ພັນສາແກ່ ໄດ້ຊັກຊວນລົງບັນຊີເປັນນັກສອບ ເພື່ອສອບເອົາ ປະກາສະນີຍະບັດ

ນັກທັມຊັ້ນຕຣີ ຢູ່ເມືອງໄທທີ່ວັດສີເມືອງ ໄດ້ປະກາສະນິຍະບັດຊັ້ນຕຣີເມືອງໄທ ໃນປີນີ້ ແລະໄດ້ຫານາມສາຍາໃຫ້ກັນ ເວລາທີ່ຈົດບັນຊີໄປສອບຢູ່ເມືອງໄທນີ້ ເອງວ່າ **ພຣະປານ ອານັນໂທ** ແມ່ນພຣະທັມ ວິຣະວັງໂສ ເປັນຜູ້ໃສ່ໃຫ້, ພຣະທັມ ເອງໃສ່ວ່າ ພຣະທັມ ວິຣະວັງໂສ. ໃນປີນີ້ໄດ້ມີຍາທ່ານ ມະຫາບຸນ ໄດ້ເດີນທາງ ຈາກເມືອງພ້ອງ ມາຈຳພັນສາຢູ່ວັດຈັນນຳກັນ.

ປີ ພ.ສ 2483 (ຄ.ສ 1940) ໄດ້ມາຈຳພັນຢູ່*ວັດຊຽງແວ່* ແລະໄດ້ ສອບເອົາປະກາສະນິຍະບັດ ນັກທັມຊັ້ນໂທ.

ປີ ພ.ສ 2484 (ຄ.ສ 1941) ໄດ້ສອບເອົາປະກາສະນິຍະບັດຊັ້ນປະຖົມ ເອກ (ມະຫາປະຣຽນສາມປະໂທຍກ) ຢູ່ທີ່ສຳນັກວັດຈັນທະບຸຣີວຽງຈັນ ສະໄໝນັ້ນ ຍັງມີທ່ານເອກາທິບໍດີຝຣັ່ງເສດເຊັນໃນໃບໄຊຍະບັດ ແລະສົມເດັດເຈົ້າ ມະຫາ ອຸປະຣາຊ ເພັດຊະຣາຊ ເຊັນເປັນປະທານທາງສາສະໜາ ໂດຍຄວາມເຫັນຊອບ ຕາມບັນທຶກຂອງຄະນະກຳມະການກວດກາ ພຸດທະບັນດິດສະພາຈັນທະບູຣີ ເມື່ອເສັງໄດ້ປະຣຽນສາມປະໂທຍກແລ້ວ ກໍໄດ້ຖືກແຕ່ງຕັ້ງເປັນ ອາຈານສອນ ປາລີຢູ່ *ວັດອຸບມຸງ* ແລ້ວອາຈານກໍໄດ້ດຳເນີນການສຶກສາທັມວິໄນ ແລະໄດ້ ສອບທຸກໆປີ ມາຈົນຮອດປີ ພ.ສ 2487 (ຄ.ສ 1943) ກໍໄດ້ ສອບເອົາປະກາ ສະນິຍະບັດປະໂທຍກ 6 ຢູ່ທີ່ວັດຈັນອີກ.

ເມື່ອສຳເລັດການຮຽນຝ່າຍປາລີ ສຳເລັດເຖິງປະໂທຍກ 6 ແລ້ວ ເວ ລານັ້ນບໍ່ທັນມີໂຮງຮຽນປາລີຂັ້ນສູງ ພຣະອາຈານ ກໍໄດ້ດຳເນີນການສັ່ງສອນ ອອກ ຕົນຍາດໂຍມຕາມວັດຕ່າງໆ ໂດຍໄດ້ຈຳພັນສາຢູ່ *ວັດຊຽງແວ່* ວຽງຈັນ ໂຮມປີການທີ່ໄດ້ຮ່ຳຮຽນ ແລະພ່ຳສອນຢູ່ໃນວຽງຈັນຄາວນັ້ນ 9 ພັນສາ ໄດ້ຢູ່ ວັດຊຽງແວ່ເຖິງ 6 ພັນສາ, ວັດອຸບມຸງ 2 ພັນສາ, ສີຖານ 1 ພັນສາ.

ຕໍ່ມາໃນປີ ພ.ສ 2489 (ຄ.ສ 1946) ໃນຂະນະທີ່ບ້ານເມືອງກຳລັງມີການ ຕໍ່ສູ້ ເພື່ອການປົດປ່ອຍຈາກ ລັດທິອານານິຄົມແບບໃໝ່ຢ່າງດຸເດືອດ ເປັນ ໄພສົງຄາມກຳລະນີພິພາກຝຣັ່ງເສດເກີດຂຶ້ນ ການຢູ່ໃນວັດຊຽງແວ່ ເຫັນວ່າບໍ່ ເປັນການປອດໄພດີ ເພາະມີລູກປືນມາຕົກໃສ່ວັດເລື້ອຍໆ ຈຳຕ້ອງໄດ້ອອກຈາກ ວັດຊຽງແວ່ຂ້າມໄປອຳເພີ *ສີຊຽງໃໝ່* (ຝັ່ງໄທ) ໄດ້ມີຜູ້ອອກເດີນທາງຂ້າມໄປ ດ້ວຍກັນຄື: ພຣະອາຈານ ມະຫາປານ ອານັນໂທ, ຍາທ່ານສີທົນ ແລະຍາທ່ານ ມະຫາສົມບູນ (ຍາທ່ານບຸນ) ພວກເພີ່ນໄດ້ໄປຢູ່ວັດຊ້າງເຜືອກ ນຶ່ງຄືນເຫັນຊາວ ບ້ານ ແລະທະຫານ ປ່ວຍເປັນໂຣກອະຫິວາຢ່າງໜັກ ຢ້ານຈະ ເປັນອັນຕະລາຍ

ຈົ່ງໄດ້ພາກັນລ່ອງເຮືອລົງໄປອຳເພີ ທ່າບໍ່, ພັກນຶ່ງຄືນ ກໍ່ໄດ້ລ່ອງ ລົງໄປໜອງຄາຍ ໄປພັກຢູ່ *ວັດໂພໄຊ*. ສ່ວນຍາທ່ານສີທົນ ເມື່ອໄປຮອດໜອງຄາຍແລ້ວເລີຍຂໍ ລາເມືອຍາມບ້ານ, ທ່ານມະຫາສົມບູນ ລົງໄປຂອນແກ່ນ ສຳຫຼັບພຣະອາຈານ ມະຫາປານ ອານັນໂທ ແມ່ນໄດ້ຈຳພັນສາຢູ່ໜອງຄາຍ ໂຮມພັນສາ 12 ໄດ້ຈຳພັນ ສາບຳເພັນທັມ ຢູ່ຈັງຫວັດໜອງຄາຍ 5 ພັນສາ.

ໃນປີ ພ.ສ 2494 (ຄ.ສ 1951) ພຣະອາຈານ ມະຫາປານ ອານັນໂທໄດ້ ຕັ້ງປະນິທານຂອງຕົນໃໝ່ວ່າ ຈຳເປັນຕ້ອງດຳເນີນທາງວິປັດສະນາທຸຣະ ຄືຝ່າຍ ກັມມະຖານ ເພີ່ນຈົ່ງໄດ້ໄປຈຳພັນສາຢູ່*ວັດມິຄະທາຍະວັນນ້ຳສວຍດົງແຂມ*ຕັ້ງຕົ້ນ ການຄົ້ນຄິດທາງສະມະຖະວິປັດສະນາ ເພື່ອປະຕິບັດທັມ ແລ້ວຕັ້ງໃຈຈະໃຫ້ ສຳ ເລັດພູມທາງວິປັດສະນາທຸຣະໃຫ້ແຈ້ງຂາວ ຕອນນີ້ແມ່ນເພີ່ນໄດ້ອົດສັນເຂົ້າເຖິງ 15 ວັນ ຮ່າງກາຍຊູບຜອມລົງ ແຕ່ບໍ່ເປັນການສຳເລັດຜົນເປັນທີ່ແນ່ນອນ ກໍເລີຍ ສັນເຂົ້າຢຽວຢາຮ່າງກາຍໃຫ້ມີກຳລັງຕໍ່ສູ້ອີກຕໍ່ໄປ.

ເມື່ອບໍ່ເປັນທີ່ແນ່ນອນທາງຈິດ ໃນການດຳເນີນການບຳເພັນວິປັດສະນາ ຈົ່ງຂຽນໜັງສື ລົງໄປບາງກອກ ຕິດຕໍ່ ພຣະທັມ ເພາະເວລານີ້ ພຣະທັມ ວິຣະວັງໂສ ສິກເປັນຈານທັມ ຢູ່ບາງກອກພຸ້ນແລ້ວ.

